ໄວ້ເປັນຂໍ້ອ້າງອີງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງແຜນການ ແລະການລົງທຶນ** **ເລກທີ 2710 /ກຜທ**

ນະຄອນຫຼວງວຽງຈັນ, ວັນທີ 9 ພະຈິກ 2017

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ

- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກໍາມະການຮ່ວມມືທະວິພາຄີ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ສສ ຫວຽດນາມ ສະບັບເລກທີ 23/ນຍ, ລົງວັນທີ 16 ມັງກອນ 2017;
- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ, ບົນພື້ນຖານການຄົ້ນຄວ້າເຫັນດີ ຂອງບັນດາກົມ, ທຽບເທົ່າກົມ ພາຍໃນ ກະຊວງ ແຜນການ ແລະ ການລົງທຶນ.

**ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປະສານງານ, ຕິດຕາມ, ຊຸກຍູ້, ສົ່ງເສີມການຮ່ວມມືລາວ-ຫວຽດ ນາມ ເພື່ອເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານກັບ ສສ ຫວຽດນາມ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຫ້ອງການຄະນະກໍາມະການຮ່ວມມືລາວ-ຫວຽດນາມ ມີຊື່ຫຍໍ້ເປັນພາສາລາວວ່າ "ຫຄຮລ-ຫວ" ແລະ ຂຽນເປັນພາສາອັງກິດວ່າ: LAO Vietnam Cooperation Committee Office ໂດຍມີຊື່ຫຍໍ້ວ່າ “L–V CCO” ແມ່ນໂຄງປະກອບໜຶ່ງໃນກົງຈັກ ຂອງກະຊວງແຜນການ ແລະ ການລົງທຶນ ພາຍໃຕ້ການຊີ້ນໍາໂດຍກົງຂອງລັດຖະມົນຕີ ກະຊວງ ແຜນການ ແລະການລົງທຶນ ທີ່ເປັນປະທານຄະນະກໍາມະການຮ່ວມມືລາວ-ຫວຽດນາມ; ມີຮອງລັດຖະມົນຕີ ກະຊວງແຜນການ ແລະການລົງ

ທຶນ ເປັນຮອງປະທານ ຜູ້ປະຈຳການ ຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ, ລັດຖະບານ ແລະ ກະຊວງແຜນການ ແລະ ການລົງທຶນ ໃນການຄຸ້ມຄອງ ລວມສູນທຸກໆບັນຫາທີ່ມີການພົວພັນກັບ ສສ ຫວຽດນາມ; ຄົ້ນຄວ້າ ກ່ຽວກັບກົນໄກນະໂຍບາຍ, ຍຸດທະສາດ ແລະ ການຮ່ວມມືທະວີພາຄີ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ແນໃສ່ຍາດແຍ່ງການຊ່ວຍເຫລືອ-ກູ້ຢືມຈາກ ສສ ຫວຽດນາມ ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງສປປ ລາວ ໃນແຕ່ລະໄລຍະ ແລະ ຈັດຕັ້ງ ຜັນຂະຫຍາຍປະຕິບັດຍຸດທະສາດ, ບັນດາສັນຍາ, ຂໍ້ຕົກລົງ, ກິດຈະການ ແລະ ໂຄງການຮ່ວມມືຕ່າງໆ ທີ່ສອງກົມການເມືອງ ແລະ ລັດຖະບານສອງປະເທດ ໄດ້ຕົກລົງ ແລະ ເຊັນກັນໃຫ້ໄດ້ຮັບໝາກຜົນຕົວຈິງ; ເປັນໃຈກາງປະສານງານດ້ານການຮ່ວມມື ແລະ ຕິດຕາມ, ຊຸກຍູ້ສົ່ງເສີມການລົງທຶນ ໃນຂົງເຂດຕ່າງໆ ທີ່ສອງຝ່າຍມີເງື່ອນໄຂ ແລະ ມີຄວາມສົນໃຈບົນຫລັກການສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ສອດຄ່ອງກັບກົດໝາຍ ຂອງແຕ່ລະປະເທດ, ລະບຽບການສາກົນ ແລະ ຈິດໃຈເພື່ອນສະຫາຍ ແລະ ມີກົນໄກປະສານງານກ່ຽວກັບວຽກງານຮ່ວມມື ລາວ-ຫວຽດນາມ ຢູ່ບັນດາທ້ອງຖິ່ນຕ່າງໆ ແມ່ນຂຶ້ນກັບພະແນກແຜນການ ແລະ ການລົງທຶນ ຂອງແຕ່ລະແຂວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ເປັນໃຈກາງປະສານສົມທົບກັບບັນດາກະຊວງ, ອົງການ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄ້ວາກົນໄກ, ນະໂຍບາຍການຮ່ວມມື ແລະ ລົງທຶນທີ່ມີປະສິດທິຜົນໃນດ້ານຕ່າງໆ ກັບ ສສ ຫວຽດນາມ; ເກັບກຳສັງລວມສະພາບຂໍ້ມູນ ເພື່ອສ້າງແຜນການຮ່ວມມືທະວີພາຄີ ໃນແຕ່ລະໄລຍະ (ປະຈຳປີ, 5 ປີ) ກັບ ສສ ຫວຽດນາມ ໃຫ້ແທດເໝາະກັບທ່າແຮງ ແລະ ເງື່ອນໄຂຄວາມສາມາດຕົວຈິງ ຂອງແຕ່ລະຝ່າຍ; ຄົ້ນຄວ້າກະກຽມບັນດາເນື້ອໃນເອກະສານ ສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆ ທີ່ລັດຖະບານສອງຝ່າຍ ຈະລົງນາມເປັນທາງການ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາອະນຸມັດຕາມຂັ້ນຕອນ ແລະ ລະບຽບການ ກ່ອນຈະນຳໄປເປີກສາຫາລືເຈລະຈາ ແລະ ຕົກລົງເປັນເອກະພາບກັບຄະນະກຳມະການຮ່ວມມື ຫວຽດນາມ-ລາວ.
2. ແນະນຳ, ຕິດຕາມ, ກວດກາ, ຊຸກຍູ້ບັນດາກະຊວງ, ອົງການ, ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດສັນຍາ, ອະນຸສັນຍາ, ບົດບັນທຶກ, ຂໍ້ຕົກລົງ, ກິດຈະການ ແລະ ໂຄງການຮ່ວມມື ແລະ ລົງທຶນຕ່າງໆ ທີ່ສອງລັດຖະບານ ໄດ້ເຊັນກັນ ແລະ ສະຫລຸບລາຍງານໃຫ້ຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ກະຊວງແຜນການ ແລະ ການລົງທຶນ, ລັດຖະບານ, ສູນກາງພັກ ແລະ ອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງເປັນປົກກະຕິໃນແຕ່ໄລຍະ ເພື່ອມີທິດຊີ້ນຳຢ່າງທັນການແນໃສ່ຊຸກຍູ້ສົ່ງເສີມການຮ່ວມມື ແລະ ລົງທຶນລະຫວ່າງ ສອງປະເທດ ໃຫ້ນັບມື້ນັບມີປະສິດທິຜົນສູງ.
3. ພົວພັນປະສານສົມທົບກັບຄະນະກຳມະການຮ່ວມມື ຫວຽດນາມ-ລາວ, ສະຖານທູດຫວຽດນາມ ປະຈຳ ສປປ ລາວ; ສະຖານທູດລາວ ປະຈຳ ສສ ຫວຽດນາມ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຢ່າງເປັນປະຈຳ ເພື່ອເປີກສາຫາລືຊຸກຍູ້ການຈັດຕັ້ງປະຕິບັດສັນຍາ, ຂໍ້ຕົກລົງຕ່າງໆທີ່ສອງຝ່າຍໄດ້ລົງນາມກັນໃຫ້ເປັນຮູບປະທຳ; ພ້ອມກັນນັ້ນ ກໍ່ສະເໜີແນະວິທີການ, ມາດຕະການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນການພົວພັນຮ່ວມມື ແລະ ລົງທຶນ ລະຫວ່າງ ລາວ-ຫວຽດນາມ ໃຫ້ປະທານຄະນະກຳມະການຮ່ວມມື ຂອງສອງປະເທດ ພິຈາລະນາຕົກລົງ.

4. ປະສານສົມທົບກັບຫ້ອງການ, ບັນດາກົມ ແລະ ພາກສ່ວນຕ່າງໆ ພາຍໃນກະຊວງແຜນການ ແລະ ການລົງທຶນ ໃນວຽກງານຕ່າງໆ ທີ່ພົວພັນເຖິງການຮ່ວມມື ແລະ ລົງທຶນ ລະຫວ່າງ ລາວ-ຫວຽດນາມ.
5. ຄຸ້ມຄອງບັນດາເອກະສານ, ການເງິນ, ວັດຖຸອຸປະກອນ, ພາຫະນະ ແລະ ເຄື່ອງໃຊ້ຫ້ອງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຖືກຕ້ອງຕາມຂໍ້ກຳນົດ ແລະ ລະບຽບການຂອງລັດ.
6. ຄົ້ນຄວ້າ ແລະ ສະເໜີວຽກງານຄຸ້ມຄອງ ແລະ ກໍ່ສ້າງພະນັກງານເຊັ່ນ: ຂຶ້ນແຜນຄວາມຕ້ອງການພະນັກງານ, ສ້າງແຜນກໍ່ສ້າງພະນັກງານ, ປະເມີນລັດຖະກອນ, ເກັບກຳສະຖິຕິ ແລະ ຊີວະປະຫວັດພະນັກງານ, ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ ແລະ ຂຽນກຳນົດຕຳແໜ່ງງານຂອງຫ້ອງການ ໃຫ້ກົມຈັດຕັ້ງ ແລະ ພະນັກງານ;
7. ຄົ້ນຄວ້າ ແລະ ສະເໜີການປະຕິບັດນະໂຍບາຍຕໍ່ພະນັກງານເຊັ່ນ: ນະໂຍບາຍຍ້ອງຍໍ, ນະໂຍບາຍເລື່ອນຊັ້ນ, ດັດແກ້ຊັ້ນ-ຂັ້ນເງິນເດືອນ, ບຳເນັດ, ບຳນານ ແລະ ລາພັກຕ່າງໆ;
8. ເຮັດໜ້າທີ່ປ້ອງກັນພັກ ແລະ ພະນັກງານ ບໍ່ໃຫ້ເຄື່ອນໄຫວຜິດກົດລະບຽບຂອງພັກ, ກົດໝາຍຕ່າງໆຂອງລັດ, ກົດລະບຽບຂອງກົມກອງ ແລະ ກະຊວງແຜນການ ແລະ ການລົງທຶນ ວາງອອກ;
9. ຕິດຕາມ, ກວດກາການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ, ພາລະບົດບາດ, ສິດ ແລະ ໜ້າທີ່, ຄວາມຮັບຜິດຊອບຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;
10. ປະຕິບັດໜ້າທີ່ອື່ນໆ ທີ່ຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ກະຊວງແຜນການ ແລະການລົງທຶນ ມອບໝາຍໃຫ້.

**ມາດຕາ 4 ຂອບເຂດສິດ**

1. ພົວພັນປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງຝ່າຍລາວ ແລະ ຝ່າຍຫວຽດນາມ ທັງພາກລັດ ແລະ ພາກທຸລະກິດ ເພື່ອເກັບກຳ ແລະ ສະໜອງຂໍ້ມູນ ຫຼື ເຂົ້າຮ່ວມປະຊຸມເປີກ ສາຫາລືແລກປ່ຽນເນື້ອໃນບັນຫາຕ່າງໆ ທີ່ພົວພັນເຖິງການຮ່ວມມື ແລະ ລົງທຶນ ລະຫວ່າງ ລາວ-ຫວຽດນາມ ເພື່ອຈັດຕັ້ງປະຕິບັດບັນດາໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;
2. ກຳນົດໜ້າທີ່, ແບ່ງງານຮັບຜິດຊອບລະອຽດ ແລະ ຈັດວາງ, ສັບຊ້ອນພະນັກງານໃຫ້ບັນດາພະແນກການ ແລະ ໜ່ວຍງານຕ່າງໆ ພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກ;
3. ສະເໜີປະຕິບັດນະໂຍບາຍກ່ຽວກັບການຍ້ອງຍໍ, ການຍົກລະດັບ, ການເລື່ອນຊັ້ນ, ຍົກຍ້າຍ, ປົດຕຳແໜ່ງ ຫຼື ປະຕິບັດວິໄນອື່ນໆ ຕໍ່ພະນັກງານ, ລັດຖະກອນ ສັງກັດໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ;
4. ນຳໃຊ້ງົບປະມານ, ເຄື່ອງໃຊ້ຫ້ອງການ, ວັດຖຸອຸປະກອນ ແລະ ພາຫະນະ ທີ່ໄດ້ຮັບອະນຸມັດຕາມຂໍ້ກຳນົດ ແລະ ລະບຽບການຂອງລັດ;
5. ເຊັນເອກະສານຕ່າງໆ ທີ່ຢູ່ໃນຂອບເຂດພາລະບົດບາດ, ໜ້າທີ່, ຂອບເຂດສິດຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ຕາມການມອບໝາຍຂອງຂັ້ນເທິງ;
6. ສະຫລຸບຜົນການຕິດຕາມ, ກວດກາ ພ້ອມທັງສະເໜີມາດຕະການ, ວິທີການແກ້ໄຂ ຜົນຂອງການກວດກາ ໃຫ້ຂັ້ນເທິງຂອງຕົນ ພິຈາລະນາຕົກລົງແກ້ໄຂ;
7. ປະຕິບັດສິດອື່ນໆ ທີ່ຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ກະຊວງແຜນການ ແລະ ການລົງທຶນ ມອບໝາຍໃຫ້ໃນແຕ່ລະໄລຍະ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ປະກອບມີ:

1. ພະແນກ ສັງລວມ;
2. ພະແນກ ຮ່ວມມືດ້ານເສດຖະກິດ ແລະ ການລົງທຶນ;
3. ພະແນກ ຮ່ວມມືດ້ານການສຶກສາ ແລະ ວັດທະນະທຳ-ສັງຄົມ;
4. ພະແນກ ຮ່ວມມືດ້ານການເມືອງ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ປະກອບມີ:

1. ຫົວໜ້າຫ້ອງການ 1 ທ່ານ ( ທຽບເທົ່າຫົວໜ້າກົມ ) ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີຕາມກົດໝາຍ ແລະ ລະບຽບການ, ມີຄວາມຮັບຜິດຊອບລາຍງານໜ້າວຽກຕໍ່ ລັດຖະມົນຕີ ກະຊວງແຜນ ການ ແລະ ການລົງທຶນ, ປະທານຄະນະກຳມະການຮ່ວມມື ລາວ-ຫວຽດນາມ ກ່ຽວກັບຜົນສຳເລັດ ແລະຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ຫົວໜ້າຫ້ອງການ ເປັນຜູ້ລົງລາຍເຊັນເອກະສານຂອງຫ້ອງການ, ຊີ້ນຳລວມທຸກວຽກງານຂອງຫ້ອງການ, ລົງເລິກຊີ້ນຳພະແນກໃດໜຶ່ງ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ;
2. ຮອງຫົວໜ້າຫ້ອງການ ຈຳນວນໜຶ່ງຊຶ່ງໄດ້ ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ຕາມກົດໝາຍ ແລະ ລະບຽບການ, ຊ່ວຍຫົວໜ້າຫ້ອງການໃນການຊີ້ນຳວຽກງານ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າຫ້ອງການ, ມີຄວາມຮັບຜິດຊອບຕໍ່ຫົວໜ້າຫ້ອງການກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

   ໃນເວລາຫົວໜ້າຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ບໍ່ຢູ່, ຮອງຫົວໜ້າຫ້ອງການເປັນຜູ້ຮັກສາການແທນຕາມການມອບໝາຍຢ່າງເປັນລາຍລັກອັກສອນ;
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼືປົດຕຳແໜ່ງໂດຍລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ຕາມກົດໝາຍ ແລະ ລະບຽບການ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ, ມີຄວາມຮັບຜິດຊອບ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງພະແນກສັງລວມ ແລະ ຈັດຕັ້ງ**

1. ເປັນເສນາທິການໃຫ້ແກ່ ຫົວໜ້າຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ ໃນການສ້າງແຜນງົບປະມານ ເພື່ອຮັບໃຊ້ໃຫ້ແກ່ການຈັດກອງປະຊຸມປະຈຳປີ, ກອງປະຊຸມກາງສະໄໝ ຫຼື ການພົບປະແບບວິສາມັນ ຂອງສອງຄະນະກຳມະການຮ່ວມມື, ກອງປະຊຸມສຳມະນາ, ຝຶກອົບຮົມ, ປາຖະກະຖາ, ແລກປ່ຽນບົດຮຽນ; ແຜນລົງເຄື່ອນໄຫວວຽກງານຕ່າງໆຢູ່ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ;

2. ຂຶ້ນແຜນງົບປະມານ ( ສ້ອມແປງພາຫະນະ, ອາຄານ, ຊື້ໃໝ່, ອຸປະກອນຮັບໃຊ້ຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ, ຮັບໃຊ້ວິຊາສະເພາະ ) ແຕ່ລະໄລຍະ ແລະ ຄຸ້ມຄອງຊັບສິນບັດຕ່າງໆ ຂອງຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ;
3. ສະຫລຸບສັງລວມວຽກງານບໍລິຫານ-ການເງິນ ຂອງຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ ປະຈໍາອາທິດ, ເດືອນ, ປີ ພ້ອມທັງຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃຫ້ມີປະສິດທິຜົນ;
4. ຮັບຜິດຊອບວຽກງານບໍລິຫານທົ່ວໄປ: ວຽກງານຂາເຂົ້າ-ຂາອອກ; ສໍາເນົາ, ສັງລວມຕິດຕາມເອກະສານ, ວຽກງານເລຂານຸການ ແລະ ຄົ້ນຄວ້ານິຕິກໍາຕ່າງໆ; ພົວພັນປະສານສົມທົບກັບ ຫ້ອງການ, ກົມກອງ, ພະແນກການຕ່າງໆ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ກ່ຽວກັບວຽກງານພິທີການ;
5. ຕິດຕາມ, ກວດກາການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ, ໂຄງການ, ສິດ ແລະ ໜ້າທີ່, ຄວາມຮັບຜິດຊອບ ຂອງການຈັດຕັ້ງ, ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ພະນັກງານ-ລັດຖະກອນ ພາຍໃນຫ້ອງການຂອງຕົນ;
6. ຄົ້ນຄວ້າ, ພິຈາລະນາຄໍາຮ້ອງ-ຄໍາສະເໜີຂອງພະນັກງານ-ລັດຖະກອນ ຢູ່ໃນຄວາມຮັບຜິດຊອບຂອງຫ້ອງການຕົນ ກ່ຽວກັບການກະທໍາ ຫຼື ຕົກລົງບັນຫາໃດໜຶ່ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ເພື່ອສະເໜີຂັ້ນເທິງຂອງຕົນແກ້ໄຂ;
7. ສະຫຼຸບສັງລວມ, ລາຍງານການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຫົວໜ້າຫ້ອງການຂອງຕົນ ແລະ ຫົວໜ້າກົມກວດກາ ກະຊວງ ຢ່າງເປັນປົກກະຕິ;
8. ພົວພັນປະສານສົມທົບກັບບັນດາພະແນກການ ພາຍໃນຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງ ໃນກະຊວງແຜນການ ແລະ ການລົງທຶນ ຕາມການມອບໝາຍ ຂອງຫົວໜ້າຫ້ອງການ;
9. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ ຂອງຫົວໜ້າຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ.

**ມາດຕາ 8 ໜ້າທີ່ຂອງພະແນກຮ່ວມມືດ້ານເສດຖະກິດ ແລະ ການລົງທຶນ.**

1. ຮັບຜິດຊອບຕິດຕາມ, ເກັບກໍາຂໍ້ມູນການຮ່ວມມືດ້ານເສດຖະກິດ ປະກອບດ້ວຍ: ຂະແໜງກະສິກໍາ-ປ່າໄມ້, ອຸດສາຫະກໍາ-ການຄ້າ, ພະລັງງານ-ບໍ່ແຮ່, ໂຍທາທິການ-ຂົນສົ່ງ, ໄປສະນີ-ໂທລະຄົມມະນາຄົມ-ການສື່ສານ, ການເງິນ, ທະນາຄານ, ຊັບພະຍາກອນທໍາມະຊາດ-ສິ່ງແວດລ້ອມ; ສະຫຼຸບສັງລວມຮອບດ້ານການຮ່ວມມືທະວິພາຄີ ແລະ ຕິດຕາມ, ສະຫລຸບ ສັງລວມສະພາບການລົງທຶນ ຂອງບັນດາຫົວໜ່ວຍທຸລະກິດຫວຽດນາມ ທີ່ມາລົງທຶນຢູ່ລາວ ແລະ ບັນດາຫົວໜ່ວຍທຸລະກິດລາວ ທີ່ໄປລົງທຶນຢູ່ຫວຽດນາມ ໃນຂົງເຂດຕ່າງໆ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອລາຍງານໃຫ້ຂັ້ນເທິງຊາບ ແລະ ມີທິດຊີ້ນໍາ ໃນແຕ່ລະໄລຍະ;
2. ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄວ້າກົນໄກນະໂຍບາຍການຮ່ວມມື ແລະ ລົງທຶນ ໃນດ້ານຕ່າງໆ ກັບ ສສ ຫວຽດນາມ ຢ່າງມີປະສິດທິຜົນ;
3. ຄົ້ນຄວ້າກະກຽມບັນດາເນື້ອໃນເອກະສານສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆ ທີ່ລັດຖະບານສອງຝ່າຍ ຈະພິຈາລະນາລົງນາມຮ່ວມກັນ;

4. ຄົ້ນຄ້ວາບັນດາກິດຈະການ, ໂຄງການຊ່ວຍເຫຼືອ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ທີ່ກ່ຽວຂ້ອງ ເພື່ອລາຍງານຂໍທິດຊີ້ນຳຈາກຂັ້ນເທິງ;
5. ຄົ້ນຄວ້າພິຈາລະນາອະນຸມັດ ການສະເໜີຂໍຍົກເວັ້ນພາສີນຳເຂົ້າວັດຖຸອຸປະກອນ ແລະ ວັດສະດຸຕ່າງໆ ຂອງບັນດາກະຊວງ, ອົງການ ແລະ ພາກສ່ວນຕ່າງໆ ເພື່ອມາຮັບໃຊ້ບັນດາໂຄງການ ຊ່ວຍເຫຼືອລ້າ ແລະ ກູ້ຢືມ (ODA) ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ;
6. ຕິດຕາມ, ເກັບກຳສະພາບດ້ານເສດຖະກິດ ແລະ ການລົງທຶນຂອງຕ່າງປະເທດຢູ່ຫວຽດນາມ, ຢ່າງ ເປັນປົກກະຕິ;
7. ພົວພັນປະສານສົມທົບກັບບັນດາພະແນກການພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງໃນກະຊວງແຜນການ ແລະ ການລົງທຶນ;
8. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຄະນະຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ.

**ມາດຕາ 9 ໜ້າທີ່ຂອງພະແນກຮ່ວມມືດ້ານສຶກສາ, ວັດທະນະທຳ-ສັງຄົມ**

1. ຮັບຜິດຊອບຕິດຕາມ, ເກັບກຳຂໍ້ມູນການຮ່ວມມືດ້ານການສຶກສາ, ວັດທະນະທຳ-ສັງຄົມ, ວິທະຍາສາດ-ເຕັກນິກ ປະກອບດ້ວຍ: ຂະແໜງການສຶກສາ-ກິລາ, ສາທາລະນະສຸກ, ແຮງງານ-ສະຫວັດດີການສັງຄົມ, ຖະແຫລງຂ່າວ-ວັດທະນະທຳ-ທ່ອງທ່ຽວ, ວິທະຍາສາດ-ສັງຄົມ, ວິທະຍາສາດ-ເຕັກໂນໂລຢີ, ບັນດາອົງການຂອງພັກ, ຂອງລັດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
2. ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄວ້າກົນໄກນະໂຍບາຍການຮ່ວມມືໃນດ້ານຕ່າງໆທີ່ກ່ຽວຂ້ອງ ກັບ ສສ ຫວຽດນາມ ຢ່າງມີປະສິດທິຜົນ;
3. ຄົ້ນຄວ້າກະກຽມບັນດາເນື້ອໃນເອກະສານສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆ ທີ່ລັດຖະບານສອງຝ່າຍ ຈະພິຈາລະນາລົງນາມຮ່ວມກັນ;
4. ຄົ້ນຄວ້າບັນດາກິດຈະການ, ໂຄງການຊ່ວຍເຫຼືອ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ທີ່ກ່ຽວຂ້ອງ ເພື່ອລາຍງານຂໍທິດຊີ້ນຳຈາກຂັ້ນເທິງ;
5. ຄົ້ນຄວ້າພິຈາລະນາອະນຸມັດການສະເໜີຂໍຍົກເວັ້ນພາສີນຳເຂົ້າວັດຖຸອຸປະກອນ ແລະ ວັດສະດຸຕ່າງໆ ຂອງບັນດາກະຊວງ, ອົງການ ແລະ ພາກສ່ວນຕ່າງໆ ເພື່ອມາຮັບໃຊ້ບັນດາໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ (ODA) ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ;
6. ຕິດຕາມ, ເກັບກຳສະພາບດ້ານການສຶກສາ, ວັດທະນະທຳ-ສັງຄົມ, ວິທະຍາສາດ-ເຕັກນິກ ຂອງ ສສ ຫວຽດນາມ ຢ່າງເປັນປົກກະຕິ;
7. ພົວພັນປະສານສົມທົບ ກັບບັນດາພະແນກການພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງໃນກະຊວງແຜນການ ແລະ ການລົງທຶນ;
8. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ.

**ມາດຕາ 10 ໜ້າທີ່ຂອງພະແນກຮ່ວມມືດ້ານການເມືອງ**

1. ຮັບຜິດຊອບຕິດຕາມ, ເກັບກຳຂໍ້ມູນການຮ່ວມມືດ້ານການເມືອງ, ການຕ່າງປະເທດ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ບັນດາອົງການຂອງພັກ, ຂອງລັດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
2. ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມື ໃນດ້ານຕ່າງໆທີ່ກ່ຽວຂ້ອງ ກັບ ສສ ຫວຽດນາມ ຢ່າງມີປະສິດທິຜົນ;

3. ຄົ້ນຄວ້າກະກຽມບັນດາເນື້ອໃນເອກະສານສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆ ທີ່ລັດຖະບານສອງຝ່າຍ ຈະພິຈາລະນາລົງນາມຮ່ວມກັນ;
4. ຄົ້ນຄວ້າບັນດາກິດຈະການ, ໂຄງການຊ່ວຍເຫຼືອ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ທີ່ກ່ຽວຂ້ອງ ເພື່ອລາຍງານຂໍທິດຊີ້ນຳຈາກຂັ້ນເທິງ;
5. ຄົ້ນຄ້ວາພິຈາລະນາອະນຸມັດການສະເໜີຂໍຍົກເວັ້ນພາສີນຳເຂົ້າວັດຖຸອຸປະກອນ ແລະ ວັດສະດຸຕ່າງໆ ຂອງບັນດາກະຊວງ, ອົງການ ແລະ ພາກສ່ວນຕ່າງໆ ເພື່ອມາຮັບໃຊ້ບັນດາໂຄງການ ຊ່ວຍເຫຼືອລ້າ ແລະ ກູ້ຢືມ (ODA) ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ;
6. ຕິດຕາມ, ເກັບກຳສະພາບດ້ານການເມືອງ, ການຕ່າງປະເທດ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຂອງ ສສ ຫວຽດນາມ ຢ່າງເປັນປົກກະຕິ;
7. ພົວພັນປະສານສົມທົບ ກັບບັນດາພະແນກການ ພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງໃນກະຊວງແຜນການ ແລະ ການລົງທຶນ;
8. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 15 ຫຼັກການ**

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ລະບອບຫົວໜ້າດຽວ, ຕົກລົງເປັນໝູ່ຄະນະ, ແບ່ງງານ ໃຫ້ບຸກຄົນຮັບຜິດຊອບແລະເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
2. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ລະບຽບກົດໝາຍ, ຫຼັກການລວມສູນຂອງລັດຖະບານ, ນຳເອົາ ແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງ, ອົງການທຽບເທົ່າກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 16 ແບບແຜນວິທີການເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນກັບບັນດາກົມ, ທຽບເທົ່າກົມ ແລະ ການຈັດຕັ້ງຕ່າງໆຂອງກະຊວງ ແລະ ບັນດາກະຊວງ, ຂະແໜງການ, ອົງການ, ທ້ອງຖິ່ນຕ່າງໆທີ່ກ່ຽວຂ້ອງ ເພື່ອແນໃສ່ການພັດທະນາວຽກງານຂອງຕົນໃຫ້ເຂັ້ມແຂງ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, ປະຈຳໄຕມາດ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຂອງຕົນ, ໃຫ້ສູນກາງພັກ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ ແລະ ຕາປະທັບ**

ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ກະຊວງ ແຜນການ ແລະ ການລົງທຶນ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ຫ້ອງການຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 2604/ຜທ, ລົງວັນທີ 23 ຕຸລາ 2015.

**ລັດຖະມົນຕີ**

ປອ ສຸພັນ ແກ້ວມີໄຊ